# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 21 ກັນຍາ 2008 (9-21-2008)

## ບໍ່ມີເວລາໃດທີ່ເໝືອນປະຈຸບັນນີ້:

**ຂໍ້ພຣະຄັມພີໃນບົດຮຽນ**: (ມັດທາຍ 25:1-13)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ພຣະເຢຊູກ່າວຄຳອຸປມາເຣື່ອງສາວປອດສິບຄົນທີ່ໄປງານແຕ່ງງານ. ຫ້າຄົນມີການຕຽມຕົວ ແລະອີກຫ້າຄົນບໍ່ໄດ້ຕຽມຕົວກ່ຽວກັບເຣື່ອງນີ້, ພຣະເຢຊູເນັ້ນໃສ່ການຕຽມຕົວທຸກ ໆ ເວລາສຳລັບການກັບມາຂອງພຣະອົງ.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:** ເວລາໄດ້ຫານໄປເປັນອະນາຄົດອີກແລ້ວ, ຖ້າຫາກຂ້ອຍສາມາດເກັບກຳເວລາໃສ່ໃນແກ້ວໄວ້ໄດ້, ເວລາມັນຜ່ານໄປຢ່າງວ່ອງໄວ, ເວລາມັນກໍສູນຫາຍໄປລ້າ ໆ. ສມັຍຂອງພວກເຮົາກໍຄືກັນກັບພວກລຸ້ນກ່ອນ ພວກເຮົາສຳນຶກໄດ້ຢ່າງເຈັບປວດທີ່ເດີນຕາມເວລາ. ເຖິງປານນັ້ນ, ກໍບໍ່ຮູ້ວ່າດ້ວຍເຫດໃດຄົນຈຶ່ງຄິດວ່າ ພວກເຂົາຍັງມີເວລາທີ່ຈະເຮັດສິ່ງທີ່ຖືກຕ້ອງຕໍ່ພຣະເຈົ້າ, ແຕ່ກໍໜ້າເສັຽໃຈ, ຫລາຍຄົນກໍໄດ້ພົບວ່າມັນສວຍເກີນໄປເສັຽແລ້ວທີ່ໄດ້ລໍຖ້າມານານເກີນໄປ ແລະກໍໝົດເວລາເສັຽກ່ອນ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:** ທ່ານຄວນຈະກ້າວໄປເຖິງຂັ້ນນຶ່ງເພື່ອໃຫ້ເຫັນວ່າທ່ານຕຽມຕົວທີ່ຈະພົບພຣະເຢຊູ ແລະໜູນນ້ຳໃຈຄົນອື່ນໆ ໃຫ້ຕຽມຕົວເຊັ່ນກັນ.

**ແນະນຳການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ
6. ໃນຫ້ອງຮຽນໃຫ້ຜູ້ນຶ່ງອາສາສມັກເລົ່າເຣື່ອງການລໍຖ້າສິ່ງໃດສິ່ງນຶ່ງທີ່ເຂົາບໍ່ຮູ້ຈັກເວລາອັນແນ່ນອນຂອງເວລາທີ່ຈະມາເຖິງ(ເຊັ່ນການມາຢ້ຽມຢາຂອງພີ່ນ້ອງທີ່ຢູ່ຕ່າງລັດ)

**1. ຍັງມີເວລາສເມີ:** (ມັດທາຍ 25:1-5)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 25:1-5
- ບົດຮຽນນີ້ໄປຄຽງຄູ່ກັບບົດຮຽນອາທິດແລ້ວນີ້ແນວໃດແດ່, ທີ່ເປັນຄຳອຸປມາກ່ຽວກັບການເຊີນໃຫ້ມາ, ແມ່ນຫຍັງທີ່ເປັນການເຊີນທີ່ຄ້າຍຄືກັນກັບການເຊີນມາເພື່ອຈັດຕຽມລໍຖ້າງານແຕ່ງງານນັ້ນ.

- ເຕືອນນັກຮຽນວ່າສາວປອດທັງສິບຄົນນັ້ນຮູ້ຈັກວ່າເຈົ້າບ່າວຈະມາ, ແຕ່ມີພຽງຫ້າຄົນເທົ່ານັ້ນທີ່ໄດ້ຈັດຕຽມເປັນຢ່າງດີ. ສົນທະນາຄົ້ນຄ້ວາ ເຖິງເຫດຜົນໃນຂໍ້ພຣະທັມເຫລົ່ານີ້ຄື: "ຖ້າທ່ານເວົ້າວ່າທ່ານໄດ້ເຊື່ອບາງສິ່ງບາງຢ່າງ ທ່ານຈະຕ້ອງທຳຕາມ, ຖ້າບໍ່ມີການປະຕິບັດຕາມສິ່ງທີ່ທ່ານເຊື່ອກໍສະແດງວ່າທ່ານບໍ່ໄດ້ເຊື່ອແທ້.
- ຂີດເປັນສອງຄໍລຳໃສ່ໃນກະດານ ແລ້ວຂຽນ ມີປັນຍາ ໃສ່ຄໍລຳທີນຶ່ງ ແລະຂຽນໂງ່ໃສ່ຄໍລຳທີສອງ ແລ້ວໃຫ້ນັກຮຽນບອກລັກສະນະນິສັຍຂອງທັງສອງຝ່າຍທີ່ສະແດງອອກມານັ້ນ ຫລືການປະຕິບັດຂອງພວກສາວປອດທັງສອງກຸ່ມນັ້ນວ່າ ເຂົາມີການຕຽມພ້ອມຢ່າງໃດ, ເຂົາໄດ້ທຳຕາມຫລືບໍ່?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ມັດທາຍ 25:1-5)

1. ຖ້າຫາກທ່ານໄດ້ສຳພາດເຂົາ, ສາວປອດທີ່ໂງ່ນັ້ນຈະເວົ້າແນວໃດ ໃນເມື່ອເຂົາໄດ້ຖືກບອກວ່າເປັນຫຍັງພວກທ່ານຈຶ່ງບໍ່ຕຽມມາພ້ອມ?
2. ຄົນສ່ວນຫລາຍທີ່ໄດ້ເລືອກເອົາການທີ່ບໍ່ຕຽມຕົວໄວ້ສຳລັບພຣະຄຣິດເປັນຄຳຕອບຂອງຜູ້ທີ່ບໍ່ເຊື່ອມີເຫດຜົນຢ່າງໃດ?
3. ທີ່ຜ່ານມາມີເວລາໃດທີ່ທ່ານບໍ່ໄດ້ຕຽມຕົວໄວ້ສຳລັບການສະເດັດກັບມາຂອງພຣະຄຣິດ?
4. ສະນັ້ນທ່ານຄວນຈະເປັນພຍານຢ່າງໃດທີ່ຈະສະແດງເຖິງຄວາມຕ້ອງການພຣະຄຣິດໃຫ້ຜູ້ທີ່ຍັງບໍ່ທັນຮູ້ຈັກພຣະອົງຮູ້?

**2. <u>ເວລາໝົດແລ້ວ:</u>** (ມັດທາຍ 25:6-9)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 25:6-9
- ອະທິບາຍເຖິງເຫດຜົນທີ່ສາວປອດທີ່ບໍ່ແບ່ງປັນນ້ຳມັນໃຫ້ກັບຫ້າຄົນນັ້ນຊຶ່ງບໍ່ແມ່ນເປັນຄົນຂີ້ຖີ່ ແຕ່ສາວປອດແຕ່ລະຄົນເຂົ້າໃຈຕ້ອງມີນ້ຳມັນພຽງພໍສະເພາະຕົນເອງຖ້າປັນໃຫ້ຄົນອື່ນແລ້ວຈະບໍ່ພໍສຳລັບຕົນເວລາເຈົ້າບ່າວມາເຖິງ. ບັນດາຜູ້ທີ່ບໍ່ເຊື່ອໄດ້ອາສັຍຄວາມລອດພົ້ນຈາກຜູ້ອື່ນທີ່ເຊື່ອແນວໃດ?
- ແບ່ງປັນການປະກາດ, ການຊ່ອຍເຫລືອຕ່າງ ໆ ຂອງທ່ານ ເພື່ອໜູນໃຈໃຫ້ນັກຮຽນມີການຕຽມຕົວໃນການດຳເນີນຊີວິດຂອງເຂົາເຈົ້າໃຫ້ຮັບໃຊ້ໃນກຸ່ມສຶກສາ ແລະໃຫ້ມີໂອກາດອອກໄປປະກາດ ຕິດຕໍ່ພົວພັນຈາກນຶ່ງຄົນໄປຫາຫລາຍຄົນ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມັດທາຍ 25:6-9

1. ຄວາມແຕກຕ່າງລະຫວ່າງການສຶກສາຮ່ຳຮຽນເພື່ອເຕີບໃຫຍ່ໃນພຣະຄຣິດ ແລະ ການອາສັຍຄວາມລອດພົ້ນຈາກຄົນອື່ນນັ້ນເປັນແນວໃດ?
2. ພຣະທັມເພງສັຣເສີນ 119:102 ໄດ້ກ່າວໄວ້ວ່າຢ່າງໃດ?
3. ທ່ານຈະບອກກັບຄົນທີ່ຫລົງຫາຍເພື່ອຊ່ອຍເຂົາໃຫ້ເຫັນເຣື່ອງການຍອມຮັບຄວາມລອດພົ້ນຂອງພຣະຄຣິດໄດ້ແນວໃດ?
4. ຂໍ້ແກ້ຕົວແນວໃດທີ່ທ່ານຄວນແກ້ໄຂ?
5. ທ່ານຈະຊ່ອຍເພື່ອນຝູງຂອງທ່ານທີ່ມີຄວາມແນ່ໃຈໃນຄວາມລອດພົ້ນແລ້ວ , ແຕ່ບໍ່ແນ່ໃຈວ່າຈະເຂົ້າ

ໃກ້ຊິດພຣະເຈົ້າໄດ້ແນວໃດນັ້ນ?

3. **<u>ເວລາທີ່ບໍ່ຮູ້ຈັກ:</u>** _(ມັດທາຍ 25:10-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 25:10-13
- ນໍາພານັກຮຽນພິຈາຣະນາເບິ່ງຄວາມຈິງທີ່ສາວປອດທັງໝົດໄດ້ຮູ້ວ່າການສະເດັດມາຂອງເຈົ້າບ່າວນັ້ນມາຢ່າງສຸກເສີນ (ຂໍ້ທີ 6), ແຕ່ພຣະອົງບໍ່ໄດ້ມາຮອດໃນທັນໃດໃນເວລານັ້ນ ຈົນກວ່າເວລາຕໍ່ມາ (ຂໍ້ 10)ຊຶ່ງຊີ້ໃຫ້ເຫັນວ່າເວລານັ້ນສັ້ນສໍາລັບການປະກາດ ແລະສໍາລັບການກັບມາຫາພຣະອົງ.
- ຣາຊອານາຈັກແຜ່ນດິນສວັນເຂົ້າມາເຖິງພວກເຮົາຢ່າງໄວໂດຍຜ່ານທາງຜູ້ປະກາດພຣະທັມໃນພຣະຄັມພີແລະຢູ່ໃນໂລກຂອງພວກເຮົາໃນປະຈຸບັນດ້ວຍ.
- ຄໍາຖາມ: ຄວາມຄາດຫວັງຂອງພວກເຮົາວ່າການສະເດັດກັບມາຂອງພຣະຄຣິດຈະມາໃນໄວ ໆ ນີ້ ພວກເຮົາຄວນຈະຕັ້ງໃຈຈົດຈໍ່ໃສ່ໃນການຈັດຕຽມໃຫ້ຫລາຍຂຶ້ນສໍາລັບເຮົາເອງ ແລະຊ່ອຍຄົນອື່ນຈັດຕຽມດ້ວຍບໍ່?
- ໃນພຣະທັມມັດທາຍ 25:13 ກ່າວໄວ້ວ່າ "ເຫດສັນນັ້ນ ຈົ່ງເຝົ້າລະວັງຢູ່ ເພາະທ່ານທັງຫລາຍບໍ່ຮູ້ຈັກວັນຫລືໂມງນັ້ນ".

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມັດທາຍ 25:10-13

1. ຕາມການອາດມະໂນພາບຂອງທ່ານວ່າແມ່ນພວກໃດທີ່ຈະຖືກປະໄວ້ທາງນອກປະຕູ?
2. ທ່ານຈະອະທິຖານດ້ວຍວິທີໃດທີ່ໃຫ້ເຂົາເຂົ້າໃຈໃນຄວາມຕ້ອງການຄວາມລອດພົ້ນຂອງເຂົາ?
3. ທ່ານໄດ້ຮຽນຮູ້ຈາກຄໍາອຸປມານີ້ວ່າພຣະເຈົ້າມາຈາກໃສ?
4. ໃນການສອນເຣື່ອງນີ້ເປັນການງ່າຍ ຫລືຍາກສໍາລັບທ່ານ?
5. ທ່ານຈະເລົ່າເຣື່ອງນີ້ໃຫ້ລູກ ໆ ຂອງທ່ານຟັງດ້ວຍວິທີໃດ?

**<u>ຈົດຈໍ່ຢູ່ໃນພຣະຄັມພີແຫ່ງຄວາມຈິງ:</u>**

- ມີຫລາຍຄົນທີ່ປາຖນາຢາກມີສ່ວນໃນການເຂົ້າໄປຣາຊອານາຈັກແຜ່ນດິນຂອງພຣະເຈົ້າ, ແຕ່ຈະມີພຽງແຕ່ຜູ້ທີ່ຕຽມຕົວໄວ້ພ້ອມແລ້ວເທົ່ານັ້ນ.
- ພວກເຮົາບໍ່ຮູ້ວ່າພຣະຄຣິດຈະສະເດັດກັບມາເມື່ອໃດ, ສະນັ້ນພວກເຮົາຕ້ອງຕຽມຕົວໄວ້ໃຫ້ພ້ອມນັບຕັ້ງແຕ່ບັດນີ້ເປັນຕົ້ນໄປເພື່ອຈະໄດ້ພົບພຣະອົງ.
- ໃນເວລາມາເຖິງແລ້ວຈຶ່ງຈະຍອມຮັບພຣະຄຣິດນັ້ນໂອກາດທີ່ຈະໄດ້ຮັບຄວາມລອດພົ້ນໝົດໄປເສັຽແລ້ວ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**